ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການປົກຄອງແຂວງ

ເລກທີ.392/ປຄປຂ
ອັດຕະປື, ວັນທີ 22 ເມສາ 2026

# ຂໍ້ຕົກລົງ
# ວ່າດ້ວຍກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ ຂອງກຳມະບານ ແຂວງ ອັດຕະປື

- ອີງຕາມ ມາດຕາ 20 ຂໍ້ທີ 16 ຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ເລກທີ 78/ ສພຊ, ລົງວັນທີ 20 ມີນາ 2025;
- ອີງຕາມ ມາດຕາ 40 (ໃໝ່) ວ່າດ້ວຍກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ ຂອງກົດໝາຍວ່າດ້ວຍກຳມະບານລາວ (ສະບັບປັບປຸງ) ເລກທີ 39/ສພຊ, ລົງວັນທີ 15 ພະຈິກ 2017;
- ອີງຕາມ ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງຂໍ້ຕົກລົງ ຂອງທ່ານເຈົ້າແຂວງ ວ່າດ້ວຍກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ ຂອງສະຫະພັນກຳມະບານແຂວງ, ສະບັບເລກທີ 04/ ສພຂ, ລົງວັນທີ 3 ກຸມພາ 2026.
- ອີງຕາມ ໜັງສືສະເໜີຂອງສະຫະພັນກຳມະບານແຂວງ ສະບັບເລກທີ 17/ສກຂ ລົງວັນທີ 2 ມີນາ 2026 ວ່າດ້ວຍ ຂໍອະນຸມັດຂໍ້ຕົກລົງ.

## ປະທານຄະນະກຳມະການປົກຄອງແຂວງ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຈັດຕັ້ງປະຕິບັດນະໂຍບາຍຂອງກອງທຶນ ເພື່ອຊ່ວຍເຫຼືອຊຶ່ງກັນ ແລະ ກັນ ບົນພື້ນຖານແນໃສ່ເຕົ້າໂຮມຄວາມສາມັກຄີ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງສະມາຊິກກຳມະບານ, ກຳມະກອນ-ຊາວຜູ້ອອກແຮງງານອື່ນ ກໍຄື ສະມາຊິກກອງທຶນ ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາແຂວງໃຫ້ດີຂຶ້ນເທື່ອລະກ້າວ.

**ມາດຕາ 2 (ປັບປຸງ) ກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ**

ກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ ຂຽນເປັນຕົວອັກສອນຫຍໍ້ວ່າ "ກຊກ" ແມ່ນການປະກອບທຶນຮອນຂອງສະມາຊິກກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ ເພື່ອຊ່ວຍເຫຼືອໃນເວລາສະມາຊິກກອງທຶນເກີດລູກ, ຜ່າຕັດ

, (ບຳເນັດ-ບຳນານ ຖ້າບໍ່ສືບຕໍ່ເປັນສະມາຊິກກອງທຶນ), ອັກຄີໄພ (ໄຟໄໝ້ເຮືອນ), ຍົກຍ້າຍໄປຕ່າງແຂວງ ຫຼື ຕ່າງປະເທດ ແລະ ເສຍຊີວິດ.

**ມາດຕາ 3 ອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ກຳມະບານ** ໝາຍເຖິງ ການຈັດຕັ້ງມະຫາຊົນທີ່ກວ້າງຂວາງ, ໃນລະບົບການເມືອງ ຂອງລະບອບປະຊາທິປະໄຕ ປະຊາຊົນ ທີ່ມີພັກປະຊາຊົນປະຕິວັດລາວ ເປັນແກນນຳ, ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງສະມາຊິກກຳມະບານ, ກຳມະກອນ-ຊາວຜູ້ອອກແຮງງານອື່ນ;
2. **ສະມາຊິກກຳມະບານ** ໝາຍເຖິງ ບຸກຄົນທີ່ເປັນພະນັກງານ-ລັດຖະກອນ, ນັກສຶກສາ, ປັນຍາຊົນ, ຢູ່ໃນການຈັດຕັ້ງພັກ-ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ກຳມະກອນ-ຊາວຜູ້ອອກແຮງງານອື່ນ ຢູ່ຫົວໜ່ວຍແຮງງານ ທີ່ໄດ້ຮັບເຂົ້າ ແລະ ຂຶ້ນທະບຽນເປັນສະມາຊິກກຳມະບານ;
3. **ກຳມະບານຮາກຖານ** ໝາຍເຖິງ ການຈັດຕັ້ງກຳມະບານຢູ່ໃນການຈັດຕັ້ງຮາກຖານ, ຫົວໜ່ວຍແຮງງານທີ່ມີສະມາຊິກກຳມະບານໜ້ອຍກວ່າໜຶ່ງຮ້ອຍຄົນ;
4. **ສະຫະພັນກຳມະບານຂະແໜງການ** ໝາຍເຖິງ ການຈັດຕັ້ງກຳມະບານໃນຫົວໜ່ວຍແຮງງານຂອງພາກລັດ ແລະ ເອກກະຊົນ ທີ່ໄດ້ຮັບການສ້າງຕັ້ງຢ່າງເປັນທາງການ ແລະ ມີສະມາຊິກກຳມະບານສັງກັດຢູ່ນັບແຕ່ໜຶ່ງຮ້ອຍຄົນຂຶ້ນໄປ;
5. **ອົງການຕາງໜ້າຜູ້ອອກແຮງງານ** ໝາຍເຖິງ ສູນກາງສະຫະພັນກຳມະບານລາວ, ສະຫະພັນກຳມະບານກະຊວງ, ອົງການ, ສະຫະພັນກຳມະບານແຂວງ, ສະຫະພັນກຳມະບານເມືອງ, ເທດສະບານ, ກຳມະບານຮາກຖານ ແລະ ຫົວໜ່ວຍແຮງງານ;
6. **ກອງທຶນ** ໝາຍເຖິງ ການປະກອບສ່ວນທຶນຂອງສະມາຊິກກອງທຶນບົນພື້ນຖານຄວາມສະໝັກໃຈ ແລະ ເຫັນດີເປັນເອກະພາບນຳຂໍ້ຕົກລົງຂອງເຈົ້າແຂວງວ່າດ້ວຍກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນເພື່ອສະສົມແຫຼ່ງທຶນ ແລະ ຮັບປະກັນໃຫ້ແກ່ການປະຕິບັດນະໂຍບາຍຕໍ່ສະມາຊິກກອງທຶນຕາມເປົ້າໝາຍທີ່ກຳນົດໄວ້;
7. **ຊ່ວຍເຫຼືອຊຶ່ງກັນ ແລະ ກັນ** ໝາຍເຖິງ ການຊ່ວຍເຫຼືອຂອງສະມາຊິກກອງທຶນດ້ວຍກັນໃນເວລາເສຍຊີວິດ, ເກີດລູກ, ຜ່າຕັດ, ບຳເນັດ-ບຳນານ ແລະ ຍົກຍ້າຍໄປຕ່າງແຂວງ ຫຼື ຕ່າງປະເທດ;
8. **ສະມາຊິກກອງທຶນ** ໝາຍເຖິງ ບຸກຄົນທີ່ມີຄວາມຕື່ນຕົວສະໝັກໃຈ ປະກອບສ່ວນພັນທະ ແລະ ໄດ້ຮັບນະໂຍບາຍຖືກຕ້ອງຕາມ ຂໍ້ຕົກລົງສະບັບນີ້;
9. **ນະໂຍບາຍ** ໝາຍເຖິງ ສິ່ງຕອບແທນຕໍ່ສະມາຊິກກອງທຶນໃນເວລາ ເສຍຊີວິດ, ເກີດລູກ, ຜ່າຕັດ, ບຳເນັດ-ບຳນານ ແລະ ຍົກຍ້າຍໄປຕ່າງແຂວງ ຫຼື ຕ່າງປະເທດ.

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ**

ໂດຍປະຕິບັດຕາມມະຕິກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຮັບຮອງເອົາກົດໝາຍວ່າດ້ວຍ ກຳມະບານລາວ (ສະບັບປັບປຸງ) ໃນມາດຕາ 40 (ໃໝ່) ອະນຸຍາດໃຫ້ກຳມະບານລາວມີກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ ເພື່ອເປັນການສົມທົບທຶນຮອນ ຂອງສະມາຊິກກອງທຶນນຳໄປຊ່ວຍເຫຼືອຊຶ່ງກັນ ແລະ ກັນໃນເວລາພົບຄວາມຫຍຸ້ງຍາກຕ່າງໆ ເພື່ອໃຫ້ອົງການຈັດຕັ້ງກຳມະບານໄດ້ເຮັດພາລະບົດບາດ, ສິດ ແລະ ໜ້າທີ່ ໃນການປົກປ້ອງສິດຜົນປະໂຫຍດອັນຊອບທຳ ຂອງກຳມະກອນ-ຊາວຜູ້ອອກແຮງງານອື່ນຢ່າງເຕັມສ່ວນ.

**ມາດຕາ 5 ຫຼັກການກ່ຽວກັບກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ**

ຫຼັກການກ່ຽວກັບກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ ມີດັ່ງນີ້:

1. ເຄົາລົບລັດຖະທຳມະນູນ ແລະ ກົດໝາຍຂອງລັດ;
2. ປະຕິບັດຫຼັກການລວມສູນປະຊາທິປະໄຕ, ໂປ່ງໃສ ແລະ ສາມາດກວດສອບໄດ້;
3. ຄວາມຕື່ນຕົວສະໝັກໃຈເຂົ້າເປັນສະມາຊິກກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ.

**ມາດຕາ 6 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບສະຫະພັນກຳມະບານ ແຂວງ, ສະຫະພັນກຳມະບານເມືອງ, ສະຫະພັນກຳມະບານຂະແໜງການ, ກຳມະບານຮາກຖານ, ຫົວໜ່ວຍແຮງງານ, ອົງການຈັດຕັ້ງສັງຄົມອື່ນ ທີ່ມີສະມາຊິກກອງທຶນສັງກັດ ແລະ ນຳໃຊ້ສະເພາະຜູ້ທີ່ເປັນສະມາຊິກກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ ຢູ່ພາຍໃນແຂວງອັດຕະປື.

**ໝວດທີ 2**

**ອົງການຄຸ້ມຄອງກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ**

**ມາດຕາ 7 (ປັບປຸງ) ອົງການຄຸ້ມຄອງກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ.**

ອົງການຄຸ້ມຄອງກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນປະກອບມີ 3 ຂັ້ນ

1. ສະຫະພັນກຳມະບານແຂວງ;
2. ສະຫະພັນກຳມະບານເມືອງ;
3. ສະຫະພັນກຳມະບານຂະແໜງການ ແລະ ກຳມະບານຮາກຖານ.

ເປັນຜູ້ຄຸ້ມຄອງໂດຍກົງຕໍ່ກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ, ແບບລວມສູນບົນພື້ນຖານສອດຄ່ອງຕາມແນວທາງ-ນະໂຍບາຍຂອງພັກ, ລະບຽບ ແລະ ກົດໝາຍຂອງລັດຢ່າງໂປ່ງໃສ.

**ມາດຕາ 8 (ປັບປຸງ) ສິດ ແລະ ໜ້າທີ່ ຂອງສະຫະພັນກຳມະບານແຂວງ.**

ສະຫະພັນກາມະບານແຂວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ນຳພາ-ຊີ້ນຳ ໂດຍກົງຕໍ່ການຈັດຕັ້ງ ຜັນຂະຫຍາຍຂໍ້ຕົກລົງສະບັບນີ້;
2. ພົວພັນປະສານສົມທົບ, ປຶກສາຫາລືກ່ຽວກັບທຸກພາກສ່ວນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານກອງທຶນ;
3. ໂຄສະນາໃຫ້ຄວາມຮູ້ຕໍ່ການຈັດຕັ້ງກຳມະບານ, ຫົວໜ່ວຍແຮງງານ, ສະມາຊິກກອງທຶນ ກຊກ, ສະມາຊິກກຳມະບານ ແລະ ກຳມະກອນ-ຊາວຜູ້ອອກແຮງງານອື່ນກ່ຽວກັບວຽກງານກອງທຶນໃຫ້ມີຄວາມເຂົ້າໃຈຢ່າງເລິກເຊິ່ງເຫັນດີ, ເຫັນພ້ອມຕໍ່ກອງທຶນ, ມີຄວາມເປັນເອກກະພາບໃນການຈັດຕັ້ງປະຕິບັດຢ່າງກ້ວາງຂວາງ ແລະ ເປັນຂະບວນການຢ່າງຟົດຟື້ນ;
4. ເກັບກຳສັງລວມຂໍ້ມູນສະຖິຕິ, ປະກົດການເຄື່ອນໄຫວຂອງສະມາຊິກກອງທຶນໃນທົ່ວແຂວງ;
5. ຮຽກຄະນະຮັບຜິດຊອບວຽກງານກອງທຶນແຕ່ລະຂັ້ນປະຊຸມເພື່ອປຶກສາຫາລືກ່ຽວກັບການເຄື່ອນໄຫວວຽກງານກອງທຶນ;

6. ຮັບເງິນກອງທຶນຈາກສະຫະພັນກຳມະບານເມືອງ, ສະຫະພັນກຳມະບານຂະແໜງການ ແລະ ກຳມະບານຮາກຖານ ທີ່ເກັບໄດ້ຈາກສະມາຊິກກອງທຶນ ແລະ ເອົາເຂົ້າບັນຊີເງິນຝາກມີກຳນົດ ແລະ ບັນຊີເງິນຝາກຝາກກະແສລາຍວັນໃນທຸກ 2 ອາທິດ;
7. ຄົ້ນຄ້ວາ ແລະ ອະນຸມັດເງິນກອງທຶນ ເພື່ອປະຕິບັດນະໂຍບາຍຕໍ່ສະມາຊິກກອງທຶນທີ່ຂໍນະໂຍບາຍປະເພດຕ່າງໆຕາມທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;
8. ອອກຂໍ້ຕົກລົງ ຮັບເອົາສະມາຊິກກອງທຶນໃໝ່ ແລະ ອອກບັດໃຫ້ສະມາຊິກກອງທຶນ;
9. ອອກແຈ້ງການເກັບເງິນກອງທຶນໃນເວລາສະມາຊິກກອງທຶນເສຍຊີວິດ;
10. ຄົ້ນຄ້ວາຊອກແຫຼ່ງລາຍຮັບເຂົ້າກອງທຶນດ້ານຕ່າງໆທີ່ສອດຄ່ອງຕາມລະບຽບ ແລະ ກົດໝາຍ;
11. ຕິດຕາມ, ກວດກາ, ເກັບກຳຫາງສຽງສັງຄົມກ່ຽວກັບການເຄື່ອນໄຫວວຽກງານກອງທຶນໃນແຕ່ລະໄລຍະ;
12. ສະຫຼຸບລາຍຮັບ-ລາຍຈ່າຍການເຄື່ອນໄຫວວຽກງານກອງທຶນປະຈຳເດືອນ, 3 ເດືອນ, 6 ເດືອນ ແລະ 1 ປີ;
13. ປະຕິບັດວຽກງານອື່ນຕາມສິດ ແລະ ໜ້າທີ່ຂອງຕົນ.

**ມາດຕາ 9 (ປັບປຸງ) ສິດ ແລະ ໜ້າທີ່ ຂອງ ສະຫະພັນກຳມະບານເມືອງ**

ສະຫະພັນກາມະບານເມືອງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ນຳພາ, ຈັດຕັ້ງຜັນຂະຫຍາຍຂໍ້ຕົກລົງສະບັບນີ້ໃຫ້ເຂົ້າສູ່ວຽກງານຕົວຈິງຮອບດ້ານ;
2. ພົວພັນປະສານສົມທົບ,ປຶກສາຫາລືກັບອົງການຄຸ້ມຄອງກອງທຶນຂັ້ນແຂວງ, ກັບຄະນະພັກ, ອຳນາດການປົກຄອງ, ສະມາຊິກກຳມະບານ, ກຳມະກອນ-ຊາວຜູ້ອອກແຮງງານອື່ນພ້ອມດ້ວຍສະມາຊິກກອງທຶນຂັ້ນຂອງຕົນໃນການຈັດຕັ້ງເຄື່ອນໄຫວວຽກງານກອງທຶນ;
3. ໂຄສະນາໃຫ້ຄວາມຮູ້ກ່ຽວກັບວຽກງານກອງທຶນຕໍ່ສະມາຊິກກຳມະບານ, ສະມາຊິກກອງທຶນ, ກຳມະກອນ-ຊາວຜູ້ອອກແຮງງານອື່ນ ໃຫ້ມີຄວາມຮັບຮູ້ເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບກອງທຶນເພື່ອຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ ໃຫ້ມີຄວາມຮັບປະກັນ ແລະ ເປັນຂະບວນການຢ່າງກວ້າງຂວາງ;
4. ປຸກລະດົມສະມາຊິກກຳມະບານ, ກຳມະກອນ-ຊາວຜູ້ອອກແຮງງານອື່ນ ຂັ້ນຂອງຕົນໃຫ້ເຂົ້າເປັນສະມາຊິກກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນໄດ້ ໜຶ່ງຮ້ອຍເປີເຊັນ;
5. ເກັບກຳສັງລວມຂໍ້ມູນສະຖິຕິ, ປະຫວັດຂອງສະມາຊິກກອງທຶນໃນຂັ້ນຂອງຕົນ;
6. ສະເໜີອົງການຄຸ້ມຄອງກອງທຶນຂັ້ນແຂວງ ອະນຸມັດອອກຂໍ້ຕົກລົງຮັບເອົາສະມາຊິກກອງທຶນຜູ້ເຂົ້າໃໝ່;
7. ເກັບ ແລະ ສັງລວມເງິນກອງທຶນຈາກສະມາຊິກກອງທຶນ ແລ້ວສົ່ງໃຫ້ອົງການຄຸ້ມຄອງກອງທຶນຂັ້ນແຂວງ;
8. ສະຫຼຸບລາຍຮັບ-ລາຍຈ່າຍກ່ຽວກັບວຽກງານກອງທຶນພາຍໃນຂັ້ນຂອງຕົນແລ້ວສົ່ງຂັ້ນເທິງປະຈຳເດືອນ, 3 ເດືອນ, 6 ເດືອນ ແລະ 1 ປີ ພ້ອມນຳເອົາບົດສະຫຼຸບລາຍຮັບ-ລາຍຈ່າຍຂອງອົງການຄຸ້ມຄອງກອງທຶນຂັ້ນແຂວງ ແລະ ຂັ້ນຂອງຕົນເພື່ອນຳໄປເຜີຍແຜ່ໃຫ້ສະມາຊິກກອງທຶນຢ່າງເປີດເຜີຍໃນແຕ່ລະໄລຍະ;
9. ມອບນະໂຍບາຍໃຫ້ສະມາຊິກກອງທຶນຊ່ວຍເຫຼືອເຊິ່ງກັນ ແລະ ກັນ;
10. ຕິດຕາມ, ກວດກາ ແລະ ເກັບກຳຫາງສຽງຂອງສະມາຊິກກອງທຶນ ແລະ_ສັງຄົມ ກ່ຽວກັບການເຄື່ອນໄຫວວຽກງານກອງທຶນດັ່ງກ່າວໃນແຕ່ລະໄລຍະ;
11. ປະຕິບັດວຽກງານອື່ນຕາມສິດ ແລະ ໜ້າທີ່ຂອງຕົນ.

**ມາດຕາ 10 (ໃໝ່) ສິດ ແລະ ໜ້າທີ່ ຂອງສະຫະພັນກຳມະບານຂະແໜງການ ແລະ ກຳມະບານຮາກຖານ**

ສະຫະພັນກຳມະບານຂະແໜງການ ແລະ ກຳມະບານຮາກຖານ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ໂຄສະນາໃຫ້ຄວາມຮູ້ກ່ຽວກັບວຽກງານກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ ຕໍ່ສະມາຊິກກຳມະບານ, ສະມາຊິກກອງທຶນ, ກຳມະກອນ-ຊາວຜູ້ອອກແຮງງານອື່ນໆ ໃຫ້ມີຄວາມຮັບຮູ້, ເຂົ້າໃຈຢ່າງເລິກເຊິ່ງກ່ຽວ

ກັບເນື້ອໃນກອງທຶນ ເພື່ອຄວາມເປັນເອກກະພາບໃນການຈັດຕັ້ງປະຕິບັດ ໃຫ້ມີຄວາມຮັບປະກັນ ແລະ ເປັນຂະບວນການຢ່າງກວ້າງຂວາງ;

2. ພົວພັນປະສານສົມທົບ, ປຶກສາຫາລືກັບອົງການຄຸ້ມຄອງກອງທຶນຂັ້ນເທິງຖັດຕົນ, ຄະນະພັກ, ອຳນາດການປົກຄອງ, ສະມາຊິກກຳມະບານ, ສະມາຊິກກອງທຶນ, ກຳມະກອນ-ຊາວຜູ້ອອກແຮງງານອື່ນໆ ທີ່ກ່ຽວຂ້ອງ;
3. ເກັບກຳສັງລວມຂໍ້ມູນສະຖິຕິ, ປະຫວັດຂອງສະມາຊິກກອງທຶນໃນຂັ້ນຂອງຕົນ;
4. ສະເໜີຂໍອະນຸມັດອອກຂໍ້ຕົກລົງຮັບເອົາສະມາຊິກກອງທຶນຜູ້ເຂົ້າໃໝ່ ຕາມຂັ້ນຕອນ;
5. ເກັບກຳ ແລະ ສັງລວມເງິນກອງທຶນຈາກສະມາຊິກກອງທຶນ ແລ້ວສົ່ງໃຫ້ອົງການຄຸ້ມຄອງກອງທຶນຂັ້ນແຂວງ;
6. ສະຫຼຸບລາຍຮັບ-ລາຍຈ່າຍກ່ຽວກັບວຽກງານກອງທຶນພາຍໃນຂັ້ນຂອງຕົນແລ້ວສົ່ງຂັ້ນເທິງປະຈຳເດືອນ, 3 ເດືອນ, 6 ເດືອນ ແລະ 1 ປີ ພ້ອມນຳເອົາບົດສະຫຼຸບລາຍຮັບ-ລາຍຈ່າຍຂອງອົງການຄຸ້ມຄອງກອງທຶນຂັ້ນແຂວງ ແລະ ຂັ້ນຂອງຕົນ ເພື່ອນຳໄປເຜີຍແຜ່ໃຫ້ສະມາຊິກກອງທຶນຢ່າງເປີດເຜີຍໃນແຕ່ລະໄລຍະ;
7. ຕິດຕາມ, ກວດກາ ແລະ ເກັບກຳຫາງສຽງຂອງສະມາຊິກກອງທຶນ ແລະ_ສັງຄົມ ກ່ຽວກັບການເຄື່ອນໄຫວວຽກງານກອງທຶນດັ່ງກ່າວໃນແຕ່ລະໄລຍະ;
8. ເຂົ້າຮ່ວມການມອບ-ຮັບນະໂຍບາຍຕ່າງໆ ໃຫ້ແກ່ສະມາຊິກກອງທຶນ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນໆ.

### ມາດຕາ 11 ຄະນະຮັບຜິດຊອບກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ ແຕ່ລະຂັ້ນ

ຄະນະຮັບຜິດຊອບກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ ຂັ້ນແຂວງ ແມ່ນສະຫະພັນກຳມະບານແຂວງ ໂດຍແມ່ນປະທານສະຫະພັນກຳມະບານແຂວງ ເປັນປະທານກອງທຶນ, ຂັ້ນສະຫະພັນກຳມະບານເມືອງ ແມ່ນປະທານສະຫະພັນກຳມະບານເມືອງ ເປັນປະທານກອງທຶນ, ຂັ້ນສະຫະພັນກຳມະບານຂະແໜງການ ແມ່ນປະທານສະຫະພັນຂະແໜງການເປັນປະທານກອງທຶນ, ຂັ້ນຮາກຖານ ແມ່ນປະທານກຳມະບານຮາກຖານເປັນປະທານກອງທຶນ ແລະ ປະກອບມີຮອງປະທານກຳມະບານແຕ່ລະຂັ້ນເປັນຮອງປະທານກອງທຶນ, ກອງເລຂາ ແລະ ການເງິນ-ການບັນຊີກອງທຶນແຕ່ລະຂັ້ນ ຊຶ່ງປະກອບມີດັ່ງນີ້:

| | | |
|---|---|---|
| 1. ປະທານກອງທຶນ | 1 | ທ່ານ; |
| 2. ຮອງປະທານກອງທຶນ | 1-2 | ທ່ານ; |
| 3. ກອງເລຂາ | 2-3 | ທ່ານ; |
| 4. ການເງິນ-ການບັນຊີ | 2 | ທ່ານ. |

### ມາດຕາ 12 ສິດ ແລະ ໜ້າທີ່ຂອງປະທານກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ

- ນາພາ-ຊີ້ນຳລວມວຽກງານກອງທຶນໃຫ້ໄປຕາມຫຼັກການ ແລະ ສອດຄ່ອງ ຕາມຂໍ້ຕົກລົງຂອງປະທານຄະນະກຳມະການປົກຄອງແຂວງ ວ່າດ້ວຍກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ ໃຫ້ເກີດດອກອອກຜົນ;
- ຄົ້ນຄວ້າ, ອະນຸມັດຮັບຮອງເອົາສະມາຊິກກອງທຶນເຂົ້າໃໝ່ ແລະ ອະນຸມັດໃຫ້ສະມາຊິກກອງທຶນລາອອກຈາກການເປັນສະມາຊິກກອງທຶນຕາມການສະເໜີຂອງສະມາຊິກກອງທຶນ ແລະ ອົງການຄຸ້ມຄອງກອງທຶນແຕ່ລະຂັ້ນ;
- ຄົ້ນຄວ້າ ແລະ ອະນຸມັດຈ່າຍເງິນນະໂຍບາຍໃຫ້ແກ່ສະມາຊິກກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ;
- ລາຍງານສະພາບການເຄື່ອນໄຫວ ແລະ ຂໍທິດຊີ້ນຳ ການຈັດຕັ້ງປະຕິບັດວຽກງານກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ ໃຫ້ຂັ້ນເທິງຖັດຕົນ ແລະ ພາກສ່ວນທີ່ກ່ຽວຂ້ອງ;

- ປະຕິບັດວຽກງານອື່ນໆກ່ຽວກັບການເຄື່ອນໄຫວວຽກງານກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ ບົນພື້ນຖານເຄົາລົບລະບຽບ, ກົດໝາຍຂອງລັດຢ່າງເຂັ້ມງວດ.

**ມາດຕາ 13 ສິດ ແລະ ໜ້າທີ່ຂອງຮອງປະທານກອງທຶນ**

- ຊ່ວຍປະທານກອງທຶນ ໃນການບໍລິຫານກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ ໃຫ້ໄປຕາມຫຼັກການ ທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;
- ລົງຊຸກຍູ້, ປຸກລະດົມສະມາຊິກກຳມະບານ, ກຳມະກອນ-ຊາວຜູ້ອອກແຮງງານ ໃຫ້ມີຄວາມຮັບຮູ້ເຂົ້າໃຈຢ່າງເລິກເຊິ່ງຕໍ່ວຽກງານກອງທຶນ ແລະ ສະໝັກໃຈເຂົ້າເປັນສະມາຊິກກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ ໃຫ້ໄດ້ດ້ານປະລິມານ ແລະ ຄຸນນະພາບ;
- ຮັກສາການແທນປະທານກອງທຶນ ໃນເວລາປະທານຕິດຂັດ ຫຼື ການມອບໝາຍ;
- ປະຕິບັດສິດໜ້າທີ່ອື່ນໆ ຕາມການມອບໝາຍຂອງປະທານກອງທຶນ.

**ມາດຕາ 14 ສິດ ແລະ ໜ້າທີ່ ຂອງກອງເລຂາ**

- ເປັນເສນາທິການ ໃຫ້ຄະນະປະທານກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ ໃນການເຄື່ອນໄຫວຈັດຕັ້ງປະຕິບັດຕົວຈິງ, ການບໍລິຫານ, ເກັບກຳ, ສັງລວມ ບັນຊີ ສະມາຊິກກອງທຶນ, ການເຂົ້າ-ອອກ ຂອງສະມາຊິກ ແລະ ດ້ານລາຍຮັບ-ລາຍຈ່າຍ ຂອງກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ ໃນແຕ່ລະໄລຍະ;
- ສະຫຼຸບຕີລາຄາຜົນການຈັດຕັ້ງເຄື່ອນໄຫວວຽກງານກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ ປະຈຳ 3 ເດືອນ, 6 ເດືອນ ແລະ 1 ປີ;
- ຂໍທິດຊີ້ນຳ ຈາກຄະນະປະທານກອງທຶນ ໃນການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ ໃນແຕ່ລະໄລຍະ;
- ຈັດຕັ້ງປະຕິບັດວຽກງານອື່ນໆທີ່ກ່ຽວຂ້ອງ ແລະ ຕາມການມອບໝາຍຂອງຄະນະປະທານກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ.

**ມາດຕາ 15 ສິດ ແລະ ໜ້າທີ່ ຂອງການເງິນ - ການບັນຊີ**

- ຂື້ນແຜນສະເໜີ ຂໍອະນຸມັດເບີກຈ່າຍນະໂຍບາຍ ໃຫ້ແກ່ສະມາຊິກກອງທຶນ ທີ່ເສຍຊີວິດ, ເກີດລູກ, ຜ່າຕັດ, ບຳເນັດ-ບຳນານ, ຍົກຍ້າຍໄປຕ່າງແຂວງ ຫຼື ຕ່າງປະເທດ ຕາມການສະເໜີຂອງສະມາຊິກກອງທຶນ ແລະ ການຈັດຕັ້ງກຳມະບານແຕ່ລະຂັ້ນ ບົນພື້ນຖານຄວາມຖືກຕ້ອງຕາມເງື່ອນໄຂກຳນົດໃນຂໍ້ຕົກລົງ ຂອງປະທານຄະນະກຳມະການປົກຄອງ ວ່າດ້ວຍ ກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ;
- ຕິດຕາມ, ຄຸ້ມຄອງລາຍຮັບ - ລາຍຈ່າຍ ກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ ໃນແຕ່ລະໄລຍະ;
- ປະຕິບັດ ເບີກຈ່າຍນະໂຍບາຍ ໃຫ້ສະມາຊິກກອງທຶນ ຕາມການຕົກລົງຂອງຄະນະປະທານກອງທຶນ;
- ສະຫຼຸບ ລາຍຮັບ - ລາຍຈ່າຍ ປະຈຳທິດ, 1 ເດືອນ, 3 ເດືອນ, 6 ເດືອນ ແລະ 1 ປີ ໃຫ້ໂປ່ງໃສ;
- ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງ ຄະນະປະທານກອງທຶນ.

## ໝວດທີ 3
## ເງື່ອນໄຂ ແລະ ລາຍຮັບ ຂອງກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ

**ມາດຕາ 16 (ປັບປຸງ) ເງື່ອນໄຂຜູ້ທີ່ຈະເຂົ້າເປັນສະມາຊິກກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ**

ເງື່ອນໄຂຜູ້ທີ່ຈະເຂົ້າເປັນສະມາຊິກກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ ມີດັ່ງນີ້:

1. ຜູ້ທີ່ເປັນສະມາຊິກກຳມະບານ ນັບແຕ່ 01 ເດືອນຂຶ້ນໄປ;
2. ກຳມະກອນ-ຊາວຜູ້ອອກແຮງງານອື່ນ ຢູ່ໃນຫົວໜ່ວຍແຮງງານຕ່າງໆ ທີ່ມີການຈັດຕັ້ງກຳມະບານ;
3. ຜົວ ຫຼື ເມຍ ແລະ ລູກຂອງສະມາຊິກກອງທຶນ (ຕ້ອງມີສຸຂະພາບແຂງແຮງ ແລະ ມີໃບຢັ້ງຢືນກວດກາສຸຂະພາບຈາກໂຮງໝໍ);
4. ຜູ້ທີ່ມີອາຍຸບໍ່ເກີນ 55 ປີ.
5. ຜູ້ທີ່ຈະເຂົ້າເປັນສະມາຊິກກອງທຶນ ຕ້ອງມີຄວາມຍິນຍອມໃຫ້ການເງິນຂະແໜງການຂອງຕົນຫັກເງິນເດືອນມອບໃຫ້ຮາກຖານ ເພື່ອມອບໃຫ້ກອງທຶນຕາມເລກທີແຈ້ງໃບແຈ້ງການຂອງກອງທຶນ;

➢ ການປະກອບເອກະສານ ແລະ ຄ່າທຳນຽມເຂົ້າເປັນສະມາຊິກກອງທຶນມີດັ່ງນີ້:

- ໃບຄຳຮ້ອງຂອງຜູ້ກ່ຽວ (ຂຽນຕາມແບບຟອມກຳນົດ);
- ຮູບຖ່າຍສີຂະໜາດ 3X4 ຈຳນວນ 2 ໃບ (ບໍ່ໃຫ້ເກີນ 3 ເດືອນ);
- ໜັງສືສະເໜີ ຂອງການຈັດຕັ້ງກຳມະບານທີ່ຕົນສັງກັດ (ຖ້າວ່າຜູ້ທີ່ເປັນສະມາຊິກກອງທຶນຈະເອົາ ຜົວ ຫຼື ເມຍ ແລະ ລູກຂອງຕົນເຂົ້າເປັນສະມາຊິກກອງທຶນ ຕ້ອງສຳເນົາປຶ້ມສຳມະໂນຄົວ ແລະ ບັດສະມາຊິກກອງທຶນຂອງຕົນຄັດຕິດມາພ້ອມ);
- ປະກອບສ່ວນເງິນເຂົ້າກອງທຶນເບື້ອງຕົ້ນຜູ້ລະ 30.000 ກີບ (ເທື່ອດຽວ).

**ມາດຕາ 17 (ປັບປຸງ) ລາຍຮັບຂອງກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ**

ລາຍຮັບຂອງກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນແມ່ນໄດ້ມາ ດັ່ງນີ້:

1. ເງິນທີ່ເກັບໄດ້ຈາກສະມາຊິກກອງທຶນຜູ້ລະ 8.000 ກີບ ຕໍ່ເລກທີ ຂອງແຈ້ງການ (ເກັບໃນເວລາສະມາຊິກກອງທຶນເສຍຊີວິດ);
2. ການປະກອບສ່ວນຂອງບຸກຄົນ ຫຼື ນິຕິບຸກຄົນ, ການຈັດຕັ້ງອື່ນ ແລະ ການຫາລາຍໄດ້ທີ່ທາງອົງການຄຸ້ມຄອງກອງທຶນຈັດຂຶ້ນ;
3. ເງິນປະກອບສ່ວນຂອງ ສະມາຊິກກອງທຶນເຂົ້າໃໝ່ເບື້ອງຕົ້ນຜູ້ລະ 30.000 ກີບ;
4. ກໍລະນີປຶ້ມບັດສະມາຊິກກອງທຶນເສຍ ຫຼື ປຶ້ມຂຽນເຕັມ ຖ້າເຮັດຄືນໃໝ່ຈະໄດ້ເສຍເງິນເພີ້ມ 20.000 ກີບຕໍ່ຫົວ;
5. ດອກເບ້ຍເງິນຝາກ ຂອງກອງທຶນຈາກທະນາຄານໃນແຕ່ລະປີ ຕາມອັດຕາດອກເບ້ຍຕົວຈິງ ໃນແຕ່ລະໄລຍະ.

## ໝວດທີ 4
## ນະໂຍບາຍກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ

**ມາດຕາ 18 (ປັບປຸງ) ນະໂຍບາຍກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ ຕໍ່ສະມາຊິກກອງທຶນ**

ນະໂຍບາຍກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ ຕໍ່ສະມາຊິກກອງທຶນ ມີດັ່ງນີ້:

1. ສະມາຊິກກອງທຶນຜູ້ທີ່ເກີດລູກ;
2. ສະມາຊິກກອງທຶນຜູ້ທີ່ໄດ້ຮັບການຜ່າຕັດ;
3. ສະມາຊິກກອງທຶນຜູ້ທີ່ເຂົ້າບຳເນັດ - ບຳນານ ທີ່ບໍ່ປາກສືບຕໍ່ເປັນສະມາຊິກກອງທຶນ;
4. ສະມາຊິກກອງທຶນຖືກອັກຄີໄພ (ໄຟໄໝ້ເຮືອນ);

5. ສະມາຊິກກອງທຶນຜູ້ທີ່ໄດ້ຮັບການຍົກຍ້າຍໄປຕ່າງແຂວງ ຫຼື ຕ່າງປະເທດ.
6. ສະມາຊິກກອງທຶນຜູ້ທີ່ເສຍຊີວິດ;

**ມາດຕາ 19 ເງື່ອນໄຂນະໂຍບາຍ ຕໍ່ສະມາຊິກກອງທຶນ**

ເງື່ອນໄຂນະໂຍບາຍ ຕໍ່ສະມາຊິກກອງທຶນ ມີດັ່ງນີ້:

1. ຕ້ອງແມ່ນຜູ້ທີ່ເຂົ້າເປັນສະມາຊິກກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ ແຕ່ 1 ວັນຂຶ້ນໄປ ໂດຍຖືກຕ້ອງຕາມລະບຽບການ;
2. ຕ້ອງປະກອບເອກະສານຖືກຕ້ອງຄົບຖ້ວນຕາມມາດຕາ 22 ຂອງຂໍ້ຕົກລົງສະບັບນີ້.

## ໝວດທີ 5
## ລາຍຈ່າຍກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ

**ມາດຕາ 20 (ປັບປຸງ) ລາຍຈ່າຍຂອງກອງທຶນ**

ລາຍຈ່າຍເງິນກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ ແບ່ງອອກຕາມເປົ້າໝາຍດັ່ງນີ້:

1. ສະມາຊິກກອງທຶນຜູ້ທີ່ເກີດລູກ;
2. ສະມາຊິກກອງທຶນຜູ້ທີ່ໄດ້ຮັບການຜ່າຕັດ ( ຜ່າຕັດກາງ, ຜ່າຕັດໃຫຍ່);
3. ສະມາຊິກກອງທຶນຜູ້ທີ່ເຂົ້າບໍານານ - ບໍານານ ທີ່ບໍ່ຢາກສືບຕໍ່ເປັນສະມາຊິກກອງທຶນ(ຄິດໄລ່ຕາມອາຍຸການເຂົ້າເປັນສະມາຊິກກອງທຶນ);
4. ສະມາຊິກກອງທຶນຖືກອັກຄີໄພ (ໄຟໄໝ້ເຮືອນ);
5. ສະມາຊິກກອງທຶນຜູ້ທີ່ໄດ້ຮັບການຍົກຍ້າຍໄປຕ່າງແຂວງ ຫຼື ຕ່າງປະເທດ(ຄິດໄລ່ຕາມອາຍຸການເຂົ້າເປັນສະມາຊິກກອງທຶນ);
6. ສະມາຊິກກອງທຶນຜູ້ທີ່ເສຍຊີວິດ (ຄິດໄລ່ຕາມອາຍຸການເຂົ້າເປັນສະມາຊິກກອງທຶນ);
7. ຈ່າຍບໍລິຫານກອງທຶນ 15 ເປີເຊັນ ຂອງເງິນປະກອບສ່ວນ ຂອງສະມາຊິກກອງທຶນຜູ້ລະ 8.000 ກີບຕໍ່ເລກທີ.

**ມາດຕາ 21 (ໃໝ່) ລາຍຈ່າຍບໍລິຫານ**

ນໍາໃຊ້ເງິນລາຍຈ່າຍບໍລິຫານກອງທຶນ 15 ເປີເຊັນ ແລະ ເງິນຄ່າປຶ້ມສະມາຊິກ ນໍາໃຊ້ດັ່ງນີ້:

1. ຄ່າຈັດພິມປຶ້ມບັດສະມາຊິກກອງທຶນ, ຊື້ມຶກ-ເຈ້ຍ;
2. ອັດຕາກິນ, ນໍ້າມັນລົດໃຫ້ພະນັກງານລົງມອບເງິນໃຫ້ຄອບຄົວຜູ້ເສຍຊີວິດ ແລະ ສິ່ງເອກະສານຕ່າງໆຂອງກອງທຶນ;
3. ຊື້ພວງມາລາ;
4. ຈັດກອງປະຊຸມ 6 ເດືອນ, 1 ປີ, ເຜີຍແຜ່ ແລະ ປັບປຸງນິຕິກໍາ;
5. ລົງຊຸກຍູ້, ຕິດຕາມ, ກວດກາວຽກງານກອງທຶນ
6. ຊື້ອຸປະກອນພາຫະນະຮັບໃຊ້ກອງທຶນເພື່ອເຄື່ອນໄຫວວຽກງານກອງທຶນ.

**ມາດຕາ 22 (ປັບປຸງ) ຈ່າຍນະໂຍບາຍຕໍ່ສະມາຊິກກອງທຶນ**

1. ຈ່າຍນະໂຍບາຍໃຫ້ສະມາຊິກກອງທຶນເກີດລູກ

+ ກໍລະນີເກີດລູກ:

- ເກີດແບບທຳມະຊາດແມ່ນໄດ້ຮັບນະໂຍບາຍ 500.000 ກີບຕໍ່ຄັ້ງ;
- ເກີດລູກດ້ວຍການຜ່າຕັດອອກ ຫຼື ເກີດລູກແຝດແມ່ນໄດ້ຮັບນະໂຍບາຍ 1.500.000 ກີບຕໍ່ ຄັ້ງ.

2. ຈ່າຍນະໂຍບາຍໃຫ້ສະມາຊິກກອງທຶນ ຜ່າຕັດ (ຜ່າຕັດກາງ, ຜ່າຕັດໃຫຍ່)

+ ສະມາຊິກກອງທຶນຜູ້ທີ່ໄດ້ຮັບການຜ່າຕັດ ແມ່ນໄດ້ຮັບນະໂຍບາຍ ດັ່ງນີ້:

1) ຜ່າຕັດກາງ ໄດ້ຮັບນະໂຍບາຍ 800.000 ກີບ;
2) ຜ່າຕັດໃຫຍ່ ໄດ້ຮັບນະໂຍບາຍ 1.500.000 ກີບ;

3. ຈ່າຍນະໂຍບາຍໃຫ້ສະມາຊິກກອງທຶນ ຜູ້ທີ່ເຂົ້າບຳເນັດ-ບຳນານ, ຍົກຍ້າຍໄປຕ່າງແຂວງ ຫຼື ຕ່າງປະເທດ ຖ້າຜູ້ກ່ຽວບໍ່ຕ້ອງການສືບຕໍ່ເຄື່ອນໄຫວກອງທຶນ ແມ່ນໄດ້ຮັບນະໂຍບາຍດັ່ງນີ້:

| | | | | |
|---|---|---|---|---|
| 1. | ເຂົ້າກອງທຶນແຕ່ | 1 ວັນ ຫາ 5 ປີ | ແມ່ນໄດ້ຮັບນະໂຍບາຍ | 500.000 ກີບ; |
| 2. | ເຂົ້າກອງທຶນແຕ່ | 5 ປີ 1 ວັນ ຫາ 10 ປີ | ແມ່ນໄດ້ຮັບນະໂຍບາຍ | 800.000 ກີບ; |
| 3. | ເຂົ້າກອງທຶນແຕ່ | 10 ປີ 1 ວັນ ຫາ 15 ປີ | ແມ່ນໄດ້ຮັບນະໂຍບາຍ | 1.100.000 ກີບ; |
| 4. | ເຂົ້າກອງທຶນແຕ່ | 15 ປີ 1 ວັນ ຫາ 20 ປີ | ແມ່ນໄດ້ຮັບນະໂຍບາຍ | 1.400.000 ກີບ; |
| 5. | ເຂົ້າກອງທຶນແຕ່ | 20 ປີ 1 ວັນ ຫາ 25 ປີ | ແມ່ນໄດ້ຮັບນະໂຍບາຍ | 1.700.000 ກີບ |
| 6. | ເຂົ້າກອງທຶນແຕ່ | 25 ປີ 1 ວັນ ຂຶ້ນໄປ | ແມ່ນໄດ້ຮັບນະໂຍບາຍ | 2.000.000 ກີບ. |

4. ຈ່າຍນະໂຍບາຍສະມາຊິກກອງທຶນກໍລະນີເກີດອັກຄີໄພ (ໄຟໄໝ້ເຮືອນ) ໄດ້ຮັບນະໂຍບາຍ 5.000.000 ກີບ ຕໍ່ຄົນ;

5. ຈ່າຍນະໂຍບາຍສະມາຊິກກອງທຶນຜູ້ທີ່ເສຍຊີວິດແມ່ນໄດ້ຮັບນະໂຍບາຍດັ່ງນີ້:

| | | | | |
|---|---|---|---|---|
| 1. | ເຂົ້າກອງທຶນແຕ່ | 1 ວັນ ຫາ 5 ປີ | ແມ່ນໄດ້ຮັບນະໂຍບາຍ | 18.000.000 ກີບ; |
| 2. | ເຂົ້າກອງທຶນແຕ່ | 5 ປີ 1 ວັນ ຫາ 10 ປີ | ແມ່ນໄດ້ຮັບນະໂຍບາຍ | 21.000.000 ກີບ; |
| 3. | ເຂົ້າກອງທຶນແຕ່ | 10 ປີ 1 ວັນ ຫາ 15 ປີ | ແມ່ນໄດ້ຮັບນະໂຍບາຍ | 24.000.000 ກີບ; |
| 4. | ເຂົ້າກອງທຶນແຕ່ | 15 ປີ 1 ວັນ ຫາ 20 ປີ | ແມ່ນໄດ້ຮັບນະໂຍບາຍ | 27.000.000 ກີບ; |
| 5. | ເຂົ້າກອງທຶນແຕ່ | 20 ປີ 1 ວັນ ຫາ 25 ປີ | ແມ່ນໄດ້ຮັບນະໂຍບາຍ | 30.000.000 ກີບ; |
| 6. | ເຂົ້າກອງທຶນແຕ່ | 25 ປີ 1 ວັນ ຂຶ້ນໄປ | ແມ່ນໄດ້ຮັບນະໂຍບາຍ | 35.000.000 ກີບ. |

### ມາດຕາ 23 (ປັບປຸງ) ການປະກອບເອກະສານຂໍນະໂຍບາຍ

ການປະກອບເອກະສານຂໍນະໂຍບາຍ ມີດັ່ງນີ້:

1. ໜັງສືຢັ້ງຢືນການເກີດລູກ ຈາກ (ໂຮງໝໍ, ສຸກສະລາ, ບ້ານ, ຫ້ອງການອື່ນໆທີ່ກ່ຽວຂ້ອງ);
2. ໜັງສືຢັ້ງຢືນການຜ່າຕັດຈາກ (ໂຮງໝໍ, ບິນຮັບຢາ,ໃບຢັ້ງຢືນການຜ່າຕັດກາງ - ຜ່າຕັດໃຫ່ຍ, ບິນຮັບເງິນ);
3. ໜັງສືຢັ້ງຢືນການເຂົ້າບຳເນັດ-ບຳນານ;
4. ໃນກໍລະນີເກີດອັກຄີໄພ (ໄຟໄໝ້ເຮືອນ) ໜັງສືຢັ້ງຢືນຈາກບ້ານ, ສາຍຕັ້ງ, ສາຍຂວາງ ທີ່ຕົນສັງກັດ;
5. ໜັງສືຢັ້ງຢືນການຍົກຍ້າຍໄປຕ່າງແຂວງ ຫຼື ຕ່າງປະເທດ ຈາກ (ສາຍຕັ້ງ, ສາຍຂວາງ ທີ່ຕົນສັງກັດ);
6. ໜັງສືຢັ້ງຢືນການເສຍຊີວິດ ຈາກ (ສາຍຕັ້ງ, ສາຍຂວາງ ທີ່ຕົນສັງກັດ);

- ➢ ການປະກອບເອກະສານຂໍນະໂຍບາຍທຸກຄັ້ງຕ້ອງມີປື້ມກອງທຶນ ແລະ ຕ້ອງແມ່ນສະບັບຕົ້ນເທົ່ານັ້ນ;
- ➢ ການປະກອບເອກະສານຂໍນະໂຍບາຍຕາມ 6 ເງື່ອນໄຂນະໂຍບາຍຕໍ່ສະມາຊິກກອງທຶນ ແມ່ນບໍ່ເກີນ 2 ເດືອນ ຖ້າເກີນຖືວ່າສະຫຼະສິດ;

➢ ພາຍຫຼັງທີ່ອົງການຄຸ້ມຄອງກອງທຶນໄດ້ຮັບເອກະສານຂໍນະໂຍບາຍ ຈາກສະມາຊິກກອງທຶນ ຖືກຕ້ອງ ແລະ ຄົບຖ້ວນແລ້ວ ສະມາຊິກກອງທຶນຕ້ອງໄດ້ຮັບນະໂຍບາຍ ພາຍໃນ 7 ວັນລັດຖະການ.

## ໝວດທີ 6
## ການຕິດຕາມ, ກວດກາ ແລະ ການໝົດສິດເປັນສະມາຊິກກອງທຶນ

### ມາດຕາ 24 ຄະນະຕິດຕາມ, ກວດກາ ພາຍໃນ

ຄະນະຕິດຕາມ, ກວດກາ ພາຍໃນປະກອບ ມີດັ່ງນີ້:

1. ສະຫະພັນກຳມະບານແຂວງ;
2. ສະຫະພັນກຳມະບານເມືອງ;
3. ສະຫະພັນກຳມະບານຂະແໜງການ;
4. ກຳມະບານຮາກຖານ;
5. ຫົວໜ່ວຍແຮງງານ.

### ມາດຕາ 25 ຄະນະຕິດຕາມ, ກວດກາ ພາຍນອກ

ຄະນະຕິດຕາມ, ກວດກາ ພາຍນອກ ມີດັ່ງນີ້:

1. ອົງການກວດກາລັດແຂວງ;
2. ພະແນກການເງິນແຂວງ;
3. ສະພາປະຊາຊົນແຂວງ;
4. ອົງການຈັດຕັ້ງມະຫາຊົນ;
5. ສະມາຊິກກອງທຶນ.

### ມາດຕາ 26 ເນື້ອໃນການຕິດຕາມ, ກວດກາ ວຽກງານກອງທຶນ

ແມ່ນການຕິດຕາມ, ກວດກາ ການຈັດຕັ້ງປະຕິບັດວຽກງານກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ ດ້ານລາຍຮັບ-ລາຍຈ່າຍນະໂຍບາຍ, ເງື່ອນໄຂຂອງການສະເໜີຂໍນະໂຍບາຍ ແລະ ການເຄື່ອນໄຫວຂອງ ສະມາຊິກກອງທຶນຢູ່ສະຫະພັນກຳມະບານແຂວງ, ສະຫະພັນກຳມະບານເມືອງ, ສະຫະພັນກຳມະບານຂະແໜງການ, ກຳມະບານຮາກຖານ ແລະ ຫົວໜ່ວຍແຮງງານ.

### ມາດຕາ 27 (ປັບປຸງ) ການໝົດສິດເປັນສະມາຊິກກອງທຶນ

ການໝົດສິດເປັນສະມາຊິກກອງທຶນ ມີດັ່ງນີ້:

1. ສະມາຊິກກອງທຶນຜູ້ທີ່ເຂົ້າບຳເນັດ-ບຳນານ ທີ່ໄດ້ຮັບນະໂຍບາຍຈາກກອງທຶນແລ້ວ;
2. ສະມາຊິກກອງທຶນຜູ້ທີ່ໄດ້ຮັບການຍົກຍ້າຍໄປຕ່າງແຂວງ ຫຼື ຕ່າງປະເທດ ທີ່ໄດ້ຮັບນະໂຍບາຍຈາກກອງທຶນແລ້ວ;
3. ສະມາຊິກກອງທຶນຜູ້ທີ່ຖືກສານຕັດສິນຕັດອິດສະລະພາບ;
4. ສະມາຊິກກອງທຶນຜູ້ທີ່ບໍ່ເສຍເງິນປະກອບເຂົ້າກອງທຶນຕາມເລກທີແຈ້ງການ 3 ເລກທີຂຶ້ນໄປໂດຍບໍ່ມີເຫດຜົນ;

5. ສະມາຊິກກອງທຶນຜູ້ທີ່ສະເໜີອອກຈາກກອງທຶນດ້ວຍຄວາມສະມັກໃຈ (ໃນກໍລະນີນີ້ສະມາຊິກແມ່ນຈະບໍ່ໄດ້ຮັບນະໂຍບາຍໃດໆຈາກກອງທຶນ);
6. ສະມາຊິກກອງທຶນຜູ້ທີ່ເສຍຊີວິດ ທີ່ໄດ້ຮັບນະໂຍບາຍຈາກກອງທຶນແລ້ວ.

## ໝວດທີ 7
## ຂໍ້ຫ້າມ

### ມາດຕາ 28 ຂໍ້ຫ້າມສໍາລັບຄະນະຮັບຜິດຊອບກອງທຶນ

ຫ້າມຄະນະຮັບຜິດຊອບກອງທຶນ ມີພຶດຕິກໍາ ດັ່ງນີ້:

1. ສວຍໃຊ້ໜ້າທີ່ຕໍາແໜ່ງທາງລັດຖະການ ທີ່ຂັດກັບຂໍ້ຕົກລົງສະບັບນີ້;
2. ນໍາເອົາເງິນກອງທຶນທີ່ເກັບໄດ້ຈາກສະມາຊິກກອງທຶນໄປໝູນໃຊ້ໃນທາງທີ່ບໍ່ຖືກຕ້ອງ;
3. ມີພຶດຕິກໍາອື່ນທີ່ເປັນການລະເມີດຂໍ້ຕົກລົງສະບັບນີ້.

### ມາດຕາ 29 ຂໍ້ຫ້າມສໍາລັບສະມາຊິກກອງທຶນ ແລະ ການຈັດຕັ້ງອື່ນ

ຫ້າມສະມາຊິກກອງທຶນ ມີພຶດຕິກໍາ ດັ່ງນີ້:

1. ນໍາພາ, ປຸກລະດົມ, ຂົ່ມຂູ່, ຈັດຕັ້ງເປັນກຸ່ມກ້ອນ, ພັກພວກ, ແບ່ງແຍກຄວາມສາມັກຄີ, ຊຸມນຸມປະທ້ວງ ຫຼື ກະທໍາສິ່ງໃດທີ່ກໍ່ໃຫ້ມີຄວາມປັ່ນປ່ວນ, ສ້າງຄວາມບໍ່ສະຫງົບ ແລະ ສ້າງຜົນເສຍຫາຍຕໍ່ການຈັດຕັ້ງກອງທຶນ;
2. ສວຍໃຊ້ບັດສະມາຊິກກອງທຶນໄປເຄື່ອນໄຫວກະທໍາຜິດກົດໝາຍ;
3. ມີພຶດຕິກໍາອື່ນທີ່ເປັນການລະເມີດຂໍ້ຕົກລົງສະບັບນີ້.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 30 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບ ການຍ້ອງຍໍ ຫຼື ນະໂຍບາຍອື່ນຕາມລະບຽບການ.

### ມາດຕາ 31 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ກ່າວເຕືອນ ແລະ ລົງໂທດຕາມກໍລະນີເບົາ ຫຼື ໜັກ ພ້ອມທັງໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ.

## ໝວດທີ 9
## ບົດບັນບັດສຸດທ້າຍ

**ມາດຕາ 32 ການຈັດຕັ້ງປະຕິບັດ**

ມອບໃຫ້ ສະຫະພັນກຳມະບານແຂວງ, ສະຫະພັນກາມະບານເມືອງ, ສະຫະພັນກຳມະບານຂະແໜງການ, ກຳມະບານຮາກຖານ, ຫົວໜ່ວຍແຮງງານ, ອົງການຈັດຕັ້ງສັງຄົມອື່ນພ້ອມດ້ວຍສະມາຊິກກອງທຶນ ເປັນຜູ້ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 33 (ປັບປຸງ) ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ພາຍຫຼັງໄດ້ລົງລາຍເຊັນ ແລະ ພາຍຫຼັງ ສິບຫ້າວັນ ນັບແຕ່ວັນພິມລົງໃນຈົດໝາຍເຫດທາງລັດຖະການເປັນຕົ້ນໄປ;

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງ ຂອງເຈົ້າແຂວງ ວ່າດ້ວຍກອງທຶນຊ່ວຍເຫຼືອເຊິ່ງກັນ ແລະ ກັນ ສະບັບເລກທີ 249/ຈຂອປ, ລົງວັນທີ 23 ກຸມພາ 2022.

ປະທານຄະນະກຳມະການປົກຄອງແຂວງ

ທະນູໄຊ ປັນຊາລິດ